# ADA ໝວດທີ II
# ສິດສາທາລະນະໃນບົດສະຫຼຸບຫຍໍ້ຂອງແຜນການປ່ຽນຖ່າຍເສັ້ນທາງ

**ສະພາບໂດຍລວມ**

ADA ໝວດທີ II ສິດສາທາລະນະໃນບົດສະຫຼຸບຫຍໍ້ຂອງແຜນການປ່ຽນຖ່າຍເສັ້ນທາງຂອງກົມການຂົນສົ່ງແຫ່ງເມືອງພອດແລນ (Portland Bureau of Transportation: PBOT) ແມ່ນຖືກບັບໃຊ້ໂດຍສະພາບໍລິຫານຕົວເມືອງພອດແລນ (Portland City Council) ໃນວັນທີ 21 ກໍລະກົດ 2021.

ກົດໝາຍວ່າດ້ວຍຄົນສັນຊາດອາເມລິກາທີ່ມີຄວາມພິການ (Americans with Disabilities Act: ADA) ໝວດທີ II ຮຽກຮ້ອງໃຫ້ລັດ ຫຼື ລັດຖະບານປະຈໍາທ້ອງຖິ່ນໃດໜຶ່ງທີ່ມີພະນັກງານ 50 ຄົນ ຫຼື ຫຼາຍກວ່ານັ້ນມີແຜນການປ່ຽນຖ່າຍ.

ແຜນການປ່ຽນຖ່າຍຕ້ອງປະກອບມີອົງປະກອບເຫຼົ່ານີ້:

- ລະບຸອຸປະສັກໃນກົດຈະກໍາທັງໝົດຂອງ PBOT ທີ່ຢູ່ຕາມຖະໜົນຫົນທາງ ແລະ ທາງຍ່າງ
- ລະບຸງົບປະມານ ແລະ ກໍານົດຕາຕະລາງສໍາລັບການຈັດຕັ້ງປະຕິບັດແຜນການ
- ຈັດໃຫ້ຂະບວນການຮ້ອງທຸກຂອງສາທາລະນະ
- ລະບຸຜູ້ຮັບຜິດຊອບເພື່ອຈັດຕັ້ງປະຕິບັດແຜນການ
- ຈັດໃຫ້ມີການເຂົ້າເຖິງໂຄງການທັງໝົດຂອງ PBOT

PBOT ມຸ່ງໝັ້ນຕໍ່ລະບົບການຂົນສົ່ງທີ່ສາມາດເຂົ້າເຖິງໄດ້ສໍາລັບຜູ້ໃຊ້ທຸກຄົນ. ເມື່ອພວກເຮົາລົງທຶນໃນໂຄງລ່າງດ້ານການຂົນສົ່ງ, ພວກເຮົາກໍ່ລົງທຶນໃນລັກສະນະທີ່ສະໜັບສະໜູນໃຫ້ມີການເຂົ້າເຖິງທີ່ຫຼາຍຂຶ້ນ ແລະ ດີຂຶ້ນສໍາລັບຊຸມຊົນຄົນຜິວສີ, ຊຸມຊົນທີ່ມີລາຍຮັບຕໍ່າ ແລະ ປະຊາຊົນທີ່ພິການ.

ໃນເມືອງພອດແລນ, PBOT ຮັບຜິດຊອບສໍາລັບການເຂົ້າເຖິງ:

- ທາງລາດອຽງ,
- ປ້າຍສໍາລັບຄົນຍ່າງ,
- ທາງຍ່າງ,
- ບ່ອນຈອດລົດ ແລະ
- ປ້າຍຈອດສໍາລັບການຖ່າຍປ່ຽນ ແລະ ລົດບໍລິການຂອງເມືອງພອດແລນ.

ໂດຍທົ່ວໄປແລ້ວ, ປ້າຍຈອດສໍາລັບລົດເມ ແລະ ລົດລາງເບົາແມ່ນຄວາມຮັບຜິດຊອບຂອງ TriMet ແຕ່ຖະໜົນ ຫຼື ທາງຍ່າງຫາປ້າຍເຫຼົ່ານັ້ນແມ່ນຄວາມຮັບຜິດຊອບຂອງ PBOT.  PBOT ຈະເຮັດວຽກກັບ TriMet ກ່ຽວກັບການປະຕິບັດຕາມປ້າຍຈອດສໍາລັບການປ່ຽນຖ່າຍ.

## ເຮັດໃຫ້ເມືອງພອດແລນສາມາດເຂົ້າເຖິງໄດ້ຫຼາຍກ່ວາ

ແຜນການປ່ຽນຖ່າຍແມ່ນຫາກໍ່ຖືກນັບໃຊ້ ແລະ ການຈັດຕັ້ງປະຕິບັດກຳລັງເລີ່ມຂຶ້ນຢ່າງເປັນທາງການ. ແຕ່ເຖິງຢ່າງໃດກໍ່ຕາມ, PBOT ໄດ້ປັບປຸງເພີ່ມເຕີມໃນລະບົບການຂົນສົ່ງໃຫ້ສາມາດເຂົ້າເຖິງໄດ້ຫຼາຍຂຶ້ນກັບເກືອບທຸກໂຄງການ. ໂຄງການ ເຊັ່ນ: Fixing Our Streets, Central City in Motion, Neighborhood Greenways, Safe Routes to Schools ແລະ ໂຄງການອື່ນໆປັບປຸງອົງປະກອບທາງການຂົນສົ່ງ ເພື່ອເຮັດໃຫ້ລະບົບສາມາດເຂົ້າເຖິງໄດ້ຫຼາຍຂຶ້ນ. ຍົກຕົວຢ່າງເຊັ່ນ: ວຽກງານການບຳລຸງຮັກສາຂອງ PBOT ຍັງປັບປຸງການເຂົ້າເຖິງໂດຍການສ້າງທາງລາດອຽງທີ່ເຊື່ອມເຂົ້າກັບຕຶກອາຄານໃນຊ່ວງໄລຍະຂອງໂຄງການປູທາງ. ໃນສຸດທ້າຍ, ໂຄງການທີ່ໂດຍນັກພັດທະນາເອກະຊົນ (ແລະ ວຽກງານສາທາລະນຸປະໂພກບາງຢ່າງ) ມັກເຮັດໃຫ້ລະບົບການຂົນສົ່ງເຂົ້າເຖິງໄດ້ຫຼາຍຂຶ້ນ.

ນອກຈາກນີ້, PBOT ກໍ່ຮັບຜິດຊອບສຳລັບການສ້າງນະໂຍບາຍ, ຂັ້ນຕອນ ແລະ ການປະຕິບັດເພື່ອໃຫ້ສາມາດເຂົ້າເຖິງໄດ້ອີກ. ໜຶ່ງຕົວຢ່າງແມ່ນການຄຸ້ມຄອງການເຂົ້າເຖິງສະຖານທີ່ຈອດລົດເພື່ອໃຫ້ແນ່ໃຈວ່າມີການເຂົ້າເຖິງ. ອີກຕື່ມຕົວຢ່າງໜຶ່ງແມ່ນການນຳໃຊ້ພາສາທີ່ສະເພາະທາງທີ່ຕ້ອງໃຫ້ຜູ້ຮັບເໝົາ ຫຼື ຕົວແທນຂາຍໃນການຈັດຫາກິດຈະກຳ, ການບໍລິການ, ແລະ ໂຄງການອື່ນໆທີ່ສອດຄ່ອງກັບ ADA. PBOT ຈະສືບຕໍ່ທົບທວນ ແລະ ປັບປ່ຽນນະໂຍບາຍ, ຂັ້ນຕອນ ແລະ ການປະຕິບັດຕາມຄວາມຈຳເປັນ. ສະມາຊິກຊຸມຊົນຈະໄດ້ເຂົ້າຮ່ວມໃນການປະກອບສ່ວນເມື່ອມີຄວາມເໝາະສົມ.

## ໂຄງການການເຂົ້າເຖິງ

ມີໂຄງການຫຼາຍໂຄງການທີ່ໃຫ້ສະມາຊິກໃນຊຸມຊົນສະເໜີການປັບປຸງການເຂົ້າເຖິງທາງລາດອຽງ, ສັນຍານຄົນຍ່າງທີ່ມີສຽງ, ແລະ ທາງຍ່າງ.

ທາງລາດອຽງໂດຍໂຄງການສະເໜີຂໍ ໄດ້ນຳສະເໜີໃຫ້ຜູ້ອາໄສຢູ່ເມືອງພອດແລນສາມາດສົ່ງສະຖານທີ່ບ່ອນທີ່ຈະເພີ່ມທາງລາດອຽງ ເຊິ່ງສາມາດຊ່ວຍສ້າງການເຂົ້າເຖິງສຳລັບພວກເຂົາເອງ ຫຼື ສະມາຊິກຄອບຄົວທີ່ມີຄວາມພິການຢູ່ໃນຊຸມຊົນຂອງພວກເຂົາ. ນີ້ແມ່ນລິ້ງໄປຫາໂຄງການນັ້ນ.

[ແບບຟອມສະເໜີຂໍທາງລາດອຽງ]

ສະມາຊິກຊຸມຊົນສາມາດສະເໜີໃຫ້ມີການຕິດຕັ້ງສັນຍານຄົນຍ່າງທີ່ມີສຽງຜ່ານລິ້ງນີ້.

[ແບບຟອມຂໍຕິດຕັ້ງສັນຍານຄົນຍ່າງທີ່ມີສຽງ]

ສະມາຊິກຊຸມຊົນສາມາດໂທຫາ 503-823-SAFE (7233) ເພື່ອລາຍງານທາງຍ່າງທີ່ບໍ່ປອດໄພ ຫຼື ສະຖານທີ່ໃນຖະໜົນ.

ຍັງມີຂັ້ນຕອນການຮ້ອງທຸກເປັນທາງການ ແລະ ຕ່າງຫາກ.
ສິ່ງນີ້ແມ່ນລິ້ງເຂົ້າໄປຫາຂັ້ນຕອນເຫຼົ່ານັ້ນ.

[ການຍື່ນຄໍາຮ້ອງທຸກກ່ຽວກັບ ADA ໝວດທີ II]

**ໜ່ວຍງານໂຄສະໜາແຜນການປ່ຽນຖ່າຍ**
ຮ່າງແຜນການແມ່ນຖືກເຜີຍແຜ່ໃນເດືອນສິງຫາ 2020.
ມັນຖືກສະໜອງໂດຍກົງຫຼາຍໃຫ້ແກ່ຫຼາຍກວ່າ 150 ອົງການຈັດຕັ້ງໃນຊຸມຊົນທີ່ສະໜັບສະໜູນ ແລະ ຮັບໃຊ້ປະຊາຊົນທີ່ພິການ ແລະ ອົງການຈັດຕັ້ງທີ່ເຮັດວຽກດ້ານວັດທະນະທໍາໂດຍສະເພາະ.
ເວັບໄຊສໍາລັບແຜນການປ່ຽນຖ່າຍມີວິດີໂອບັນລະຍາຍທີ່ອະທິບາຍເຖິງແຜນການ.
ມັນຍັງປະກອບມີແຜນ, ບົດສະຫຼຸບຂອງແຜນການ ແລະ ການສໍາຫຼວດ
ເຊິ່ງແຕ່ລະຢ່າງແມ່ນຖືກແປເປັນຫຼາຍກວ່າ 10 ພາສາ.  PBOT
ເປັນເຈົ້າພາບໃນການເປີດເຮືອນທາງອອນລາຍຈໍານວນ 6 ຫ້ອງ ແລະ ນໍາສະເໜີໃຫ້ແກ່ 13
ອົງການຈັດຕັ້ງຊຸມຊົນ ຫຼື ການປະຊຸມ.

**ການຈັດຕັ້ງປະຕິບັດ ແລະ ຂັ້ນຕອນຕໍ່ໄປ**
ນີ້ແມ່ນແຜນການ 20 ປີ ເຊິ່ງຈະຖືກປັບປຸງຢ່າງນ້ອຍທຸກໆ 5 ປີ. PBOT
ຈະຕີພິມບົດລາຍງານຄວາມຄືບໜ້າປະຈໍາປີຢູ່ເວັບໄຊ້ແຜນການປ່ຽນຖ່າຍ.  ໂຄງການ PBOT
ແລະ
ວຽກງານອື່ນໆຈະມີການປ່ຽນແປງລະບົບການຂົນສົ່ງຢູ່ເປັນປະຈໍາເພື່ອເຮັດໃຫ້ມີຄວາມສອດຄ່ອງກັນຫຼາຍຂຶ້ນ.
ວຽກງານອື່ນໆໃນປີຊ່ວງທໍາອິດຂອງການຈັດຕັ້ງປະຕິບັດຈະປະກອບມີການປະເມີນໂດຍລວມກ່ຽວກັບສິ່ງທີ່ບໍ່ສອດຄ່ອງກັນ ເພື່ອແຈ້ງໃຫ້ຮັບຊາບດີຂຶ້ນກ່ຽວກັບແຜນການໃນປີຖັດມາ.

ເງິນທຶນໃນໂຄງການ PBOT, ວຽກງານບໍາລຸງຮັກສາ, ວຽກງານຝ່າຍສາທາລະນຸປະໂພກ ແລະ ການກໍ່ສ້າງໂດຍນັກພັດທະນາມັກຈະປະກອບມີວຽກງານທາງຍ່າງ, ທາງລາດອຽງ,
ສັນຍານຄົນຍ່າງ, ບ່ອນຈອດລົດ ແລະ ປ້າຍຢຸດ. ນອກຈາກນີ້,
ມີງົບປະມານທີ່ຈັດສັນສະເພາະສໍາລັບການກໍ່ສ້າງທາງລາດອຽງຈົນຮອດປີ 2032
ເຊິ່ງກ່ຽວກັບຂໍ້ຕົກລົງຕ່າງຫາກ.

ຂ້າງລຸ່ມນີ້ແມ່ນລິ້ງໄປຫາແຜນສຸດທ້າຍ.

ADA ໝວດທີ II ສິດສາທາລະນະໃນແຜນການປ່ຽນຖ່າຍເສັ້ນທາງເປັນພາສາອັງກິດ

ADA ໝວດທີ II ສິດສາທາລະນະໃນແຜນການປ່ຽນຖ່າຍເສັ້ນທາງເປັນພາສາແອັດສະປາຍໂຍນ

ADA ໝວດທີ II ສິດສາທາລະນະໃນແຜນການປ່ຽນຖ່າຍເສັ້ນທາງເປັນພາສາຈີນ

ADA ໝວດທີ II ສິດສາທາລະນະໃນແຜນການປ່ຽນຖ່າຍເສັ້ນທາງເປັນພາສາຫວຽດນາມ

ADA ໝວດທີ II ສິດສາທາລະນະໃນແຜນການປ່ຽນຖ່າຍເສັ້ນທາງເປັນພາສາຣັດເຊຍ

ສາມາດສົ່ງຄຳຖາມ ຫຼື ຄຳຄິດເຫັນທາງອີເມວຫາ ADATransitionPlan@portlandoregon.gov

ເດືອນສິງຫາ 2021